ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

-----====000====-----

ກະຊວງການເງິນ

ກົມພາສີ

ເລກທີ: 07358/ກພສ

ນະຄອນຫຼວງວຽງຈັນ, ວັນທີ: 14 NOV 2017

## ຂໍ້ຕົກລົງ

**ວ່າດ້ວຍການທົດລອງນຳໃຊ້ ໂມດູນຄຸ້ມຄອງການຂົນສົ່ງສິນຄ້າ (Manifest Module) ແລະ ໂມດູນຄຸ້ມຄອງການເຄື່ອນຍ້າຍສິນຄ້າ (T1 Module) ຢູ່ດ່ານພາສີສາກົນດ່ານພາສີສາກົນຂົວມິດຕະພາບ II, ດ່ານພາສີສາກົນແດນສະຫວັນ, ໜ່ວຍງານພາສີປະຈຳສາງທ່າບົກສະຫວັນນະເຂດ, ດ່ານພາສີສາກົນບໍ່ເຕັນ ແລະ ດ່ານພາສີສາກົນຂົວມິດຕະພາບ IV**

----------------------------------------

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ ເລກທີ 57/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ບົດແນະນຳຂອງກົມພາສີ ສະບັບເລກທີ 00097/ກພສ, ລົງວັນທີ 06 ມັງກອນ 2017 ກ່ຽວກັບການແຈ້ງພາສີເປັນລາຍລະອຽດດ້ວຍລະບົບເອເລັກໂຕຣນິກ.

ເພື່ອຮັບປະກັນໃຫ້ການແຈ້ງຂໍ້ມູນເອກະສານຂົນສົ່ງສິນຄ້າ ແລະ ການຄຸ້ມຄອງການເຄື່ອນຍ້າຍຜ່ານແດນສາກົນ ແລະ ພາຍໃນ ໃຫ້ມີລັກສະນະກັດທັດຮັດ, ຮັດກຸມ ແລະ ທັນສະໄໝ ຂຶ້ນກວ່າເກົ່າ.

### ຫົວໜ້າກົມພາສີ ອອກຂໍ້ຕົກລົງ:

ມາດຕາ 01: ມອບໃຫ້ດ່ານພາສີສາກົນຂົວມິດຕະພາບ II, ດ່ານພາສີສາກົນແດນສະຫວັນ, ໜ່ວຍງານພາສີປະຈຳສາງທ່າບົກສະຫວັນນະເຂດ, ດ່ານພາສີສາກົນບໍ່ເຕັນ ແລະ ດ່ານພາສີສາກົນຂົວມິດຕະພາບ IV ເປັນເຈົ້າການທົດລອງນຳໃຊ້ໂມດູນຄຸ້ມຄອງຂໍ້ມູນການຂົນສົ່ງ (Manifest) ເຂົ້າໃນການແຈ້ງ ແລະ ການຄວບຄຸມກວດກາຂໍ້ມູນການຂົນສົ່ງ ທຸກໆປະເພດສິນຄ້າ ແລະ ໂມດູນຄຸ້ມຄອງການເຄື່ອນຍ້າຍສິນຄ້າຜ່ານແດນສາກົນ ແລະ ພາຍໃນ ໃຫ້ສຳເລັດ ພາຍໃນ ປີ 2017 ນີ້ ເພື່ອສ້າງເງື່ອນໄຂຜັນຂະຫຍາຍ, ນຳໃຊ້ ໃນຂອບເຂດທົ່ວປະເທດ ໃນຕົ້ນປີ 2018.

ມາດຕາ 02: ມອບໃຫ້ ພະແນກລະບຽບການ ແລະ ຂັ້ນຕອນການແຈ້ງ ສົມທົບກັບ ພະແນກແຜນການ ແລະ ຂໍ້ມູນຂ່າວສານ ຮັບຜິດຊອບ ຮ່າງບົດແນະນຳການນຳໃຊ້, ຂຶ້ນແຜນເຜີຍແຜ່ແນະນຳ, ຝຶກອົບຮົມ ໃຫ້ເຈົ້າໜ້າທີ່ພາສີ ແລະ ຜູ້ປະກອບການ ແລະ ຜັນຂະຫຍາຍຕິດຕັ້ງ ທັງ 2 ໂມດູນ ໃຫ້ບັນດາດ່ານພາສີສາກົນ ໃນຂອບເຂດທົ່ວປະເທດ ໃຫ້ສຳເລັດຕາມເປົ້າໝາຍ.

ມາດຕາ 03: ມອບໃຫ້ ພະແນກອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ, ກອງກວດກາພາສີປະຈຳແຕ່ລະແຂວງ, ດ່ານພາສີສາກົນໃນຂອບເຂດທົ່ວປະເທດ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ມາດຕາ 04: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຮັກສາການຫົວໜ້າກົມພາສີ**

ບຸນປະເສີດ ສີກຸນລະບຸດ